VHFs

Laotian

# ໂຣຄ໌ "ວາຍເຣິນ ເຣມໍຣາຢິກ ຟີເວີ້" (ໂຣຄໄຂ້ອອກເລືອດ)

## ໂຣຄ໌ "ວາຍເຣິນ ເຣມໍຣາຢິກ ຟີເວີ້" ແມ່ນຫຍັງ?

"ວາຍເຣິນ ເຣມໍຣາຢິກ ຟີເວີ້" (VHFs) ເປັນໂຣຄ໌ຊະນິດນຶ່ງ ທີ່ເກີດມາຈາກ "ແບກທີເຣັຽ" ຫລາຍຊະນິດ. ພຍາດ ນັ້ນຈະສົ່ງຜົນທຳຮ້າຍຕໍ່



*ເຊື້ອວາຍຣັສ໌ ອີໂບລາ*

ອະວັຍະວະຂອງຮ່າງກາຍຫລາຍລະບົບພ້ອມກັນ. ມັນຈະທຳລາຍເສັ້ນເລືອດ ແລະ ສົ່ງຜົນກະທົບກະເທື່ອຕໍ່ລະບົບປະສາດທີ່ຄວບຄຸມຮ່າງກາຍ.

VHFs ບາງຊະນິດ ກໍ່ບໍ່ຮ້າຍແຮງເທົ່າໃດ ແຕ່ບາງຊະນິດກໍເປັນອັນຕະລາຍທີ່ສຸດອາດທຳໃຫ້ເສັຍຊີວິດຍ້ອນ. ພະຍາດນີ້ ທຳໃຫ້ມີເລືອດອອກເລື້ອຍໆ ພ້ອມໆກັນມີອາການຊັບຊ້ອນຢ່າງອື່ນເກີດຂື້ນອີກ. ມີພຽງແຕ່ ອາການເລືອດອອກເທົ່ານັ້ນ ຖ້າຫາກເປັນຢູ່ດົນນານອາດຈະພາໃຫ້ເສັຍຊີວິດຍ້ອນ.

ມີ "ວາຍເຣີສ" ພະຍາດ VHFs ຫລາຍຊະນິດ ທີ່ອາດຈະເອົາໄປໃຊ້ ເປັນອາວຸດໄດ້ ໂດຍສະເພາະ ພະຍາດຕ່າງໆດັ່ງຕໍ່ໄປນີ້

- "ອີໂບລາ"
- "ມາກເບີດ"
- "ລາຊຊາ"
- "ວາຍເຣີສ" ທີ່ຄົ້ນພົບຊະນິດໃໝ່
- "ມາຊູໂປ" (ໄຂ້ອອກເລືອກ ປະເທດ ໂບລີເວັຽ)
- "ຢູນີ" (ໄຂ້ອອກເລືອດ ປະເທດ ອາກຢັນຕີນາ)
- "ກົວນາຣີໂຕ" (ໄຂ້ອອກເລືອດ ປະເທດ ວີນີຊູແອນລາ)
- "ຊາເບັຽ" (ໄຂ້ອອກເລືອດ ປະເທດ ບຣາຊີນ)
- "ຣີຟວານເລ ຟີເວີ້"
- "ແຢນໂລ ຟີເວີ້"
- "ວາຍເຣີສ" ຈາກ "ເກັຽຊາເນີ້ ໂຟແຣສ"
- Omsk hemorrhagic fever

## ຈະຕິດເຊື້ອໂຣກເຫຼົ່ານີ້ໄດ້ຢ່າງໃດ?

ຕາມທຳມະຊາຕແລ້ວ ຄົນເຮົາຈະຕິດໂຣກ VHFs ຍ້ອນ ເຫັບ ຫຼືໄຣ, ຍູງ ຫລື ໝູປ່າ. ຄົນຈະຕິດພະຍາດນີ້ໄດ້ໂດຍການໄປຖືກກັບນ້ຳປັສາວະ, ອຸຈາຣະ ແລະພາກສ່ວນອື່ນຂອງໝູປ່າທີ່ເປັນພະຍາດມາ. ຄົນຈະຕິດພະຍາດ VHFs ໄດ້ເພາະຈາກຍູງຫລືໄຣກັດ, ຫລືວ່າໄປຢຽບຖືກໂຕໄຣທີ່ຕິດເຊື້ອ. ບາງກໍຣະນີກໍບໍ່ຮູ້ຈັກກະຈ່າງແຈ້ງວ່າ ຄົນຕິດພະຍາດເຫຼົ່ານັ້ນໄດ້ແນວໃດ.

## ຕິດພະຍາດເຫລົ່ານີ້ນຳຄົນອື່ນໄດ້ບໍ?

ບາງ "ວາຍເຣີສ" ຂອງ VHFs ເຊັ່ນ "ອີໂບລາ", "ມາກເບີກ" ແລະ "ລາຊຊາ" ຕິດແຜ່ຂຫຍາຍໃສ່ກັນໄດ ລະຫວ່າງຄົນຕໍ່ຄົນ. ມັນຈະຕິດຕໍ່ໄດ້ຍ້ອນຄົນເຮົາຢູ່ໃຊ້ຊິດຕິດແທບກັນກັບຜູ້ທີ່ມີເຊື້ອໂຣກຫຼືວ່າທາງນ້ຳຕ່າງໆຈາກທາງຮ່າງກາຍ. ຄົນຈະຕິດພະຍາດນັ້ນໄດ້ອີກ ຍ້ອນການຈັບບາຍສິ່ງທີ່ຕິດເຊື້ອພະຍາດຕິດມານຳເຊັ່ນເຂັມສັກຢາຫລືຫລອດຢາ.

## ເປັນຫຍັງໂຣກເຫຼົ່ານີ້ຈຶ່ງຖືວ່າອາດເປັນອາວຸດໄດ້?

ບາງ "ວາຍເຣີສ" ຂອງ VHFs ເຊັ່ນ "ອີໂບລາ", "ມາກເບີກ", "ລາຊຊາ", ໄຂ້ໝາກເຫລືອງ ແລະ "ວາຍເຣີສ" ຊະນິດໃໝ່ທີ່ພົບເຫັນ ບາງຊະນິດ ສາມາດຜະລິດໃຫ້ເປັນແບບຂອງແຫຼວໄດ້. ຈາກນັ້ນເຂົາຈະປ່ອຍ "ວາຍເຣີດ" ນັ້ນໄປຕາມອາກາດເພື່ອໃຫ້ຄົນທັງຫລາຍຕິດເຊື້ອໄດ້. "ວາຍເຣີສ" ຂອງ VHFs ຊະນິດອື່ນ ເຊັ່ນ "ຣີຟວານເລ ຟີເວີ້" ໄດ້ເຄີຍພົບເຫັນວ່າທຳໃຫ້ຕິດເຊື້ອໄດ້ໃນເມື່ອປ່ອຍໄປຕາມອາການດຢູ່ໃຫ້ຫ້ອງວິຈັຍທົດລອງນັ້ນ.

ອະດີດປະເທດ ໂຊຫວຽດເຄີຍສ້າງ "ວາຍເຣີສ" "ມາກເບີດ" ຂື້ນເພື່ອນຳເອົາໄປໃຊ້ເປັນອາວຸດ ແລະເຄີຍໄດ້ຄົ້ນຄວ້າກ່ຽວກັບ "ອີໂບລາ", "ລາຊຊາ", "ຣີຟວານເລ ຟີເວີ້", "ແຢນໂລ ຟີເວີ້" ແລະ "ວາຍເຣີສ" ທີ່ຄົ້ນພົບເຫັນໃນໂລກໃໝ່. ສະຫະຣັຖອາເມຣິກາໄດ້ທຳການຄົ້ນຄ້ວາ ກ່ຽວກັບ "ວາຍເຣີສ" ທຸກຊະນິດທີ່ໄດ້ກ່າວມານີ້ ເວັ້ນເສັຽແຕ່ "ມາກເບີກ" ແລະ "ອີໂບລາ". ຄິດວ່າປະເທດ ເກົາຫລີເໜືອ ກໍ່ໄດ້ຄົ້ນຄວ້າເບິ່ງໂຣກ "ແຢນໂລຟີເວີ້" "ວາຍເຣີສ" ເພື່ອຈະນຳເອົາໄປໃຊ້ເປັນອາວຸດຄືກັນ.

## ໂຣກ VHFs ປິ່ນປົວໄດ້ບໍ?

ຢາຕ້ານເຊື້ອ "ວາຍເຣີສ" ໄດ້ຖືກເອົາມາໃຊ້ເພື່ອປິ່ນປົວເຊື້ອໂຣກ VHFs ບາງຊະນິດໄດ້. ການດູແລເອົາໃຈໃສ່, ແລະປິ່ນປົວອາການຕ່າງໆແມ່ນມີມີຄວາມສຳຄັນຕໍ່ການຮັກສາພະຍາດທັງໝົດ.

## ໂຣຄ໌ເຫຼົ່ານີ້ຫລີກລ້ຽງໄດ້ບໍ?

ມີຢາ "ວັກຊີນ" ບາງຢ່າງໄຊ້ໄດ້ຜົນ ສຳລັບ VHFs ບາງສະນິດ ລວມທັງ "ແຢນໂລ ຟີເວີ້". ການຄົ້ນຄວ້າຫາຢາວັກຊີກທີ່ຈະມາປິ່ນປົວເຊື້ອ "ວາຍເຣີສ" VHFs ອື່ນໆໄດ້ຮັບຜົນສຳຮັບບາງເຊື້ອວາຍເຣີສໄດ້. ໃນບາງບ່ອນທີ່ ພົບເຫັນວ່າພຍາດເຫຼົ່ານີ້ຍັງເກີດມີຢູ່ຕາມທຳມະຊາດ, ການຄວບຄຸມກໍຄືການກຳຈັດຍູງແລະໄຣຈະກໍ່ຊ່ວຍລຸດຜ່ອນປ້ອງກັນພຍາດບາງຢ່າງຂອງເຊື້ອໂຣກ VHFs ນີ້ໄດ້.

MINNESOTA MDH DEPARTMENT OF HEALTH
Communications Office
625 North Robert Street/Box 64975
St. Paul, MN 55164-097
(651) 201-4989
www.health.state.mn.us

## ຕ້ອງເຮັດແນວໃດ ຖ້າຄິດວ່າຂ້ອຍອາດຕິດເຊື້ອ VHFs ມາແລ້ວ"?

ຖ້າທ່ານຫາກໄປຕິດເຊື້ອໂຣກ VHFs ມາແລ້ວ, ມັນກໍ່ບໍ່ຊ່າງວ່າທ່ານຈະຮູ້ເອງໄດ້. ແຕ່ວ່າຖ້າທ່ານຫາກຍັງສົງໃສວ່າຕົນເອງອາດຈະຕິດໂຣກນັ້ນແນ່ນອນ, ທ່ານຕ້ອງໄປຫາໝໍຜູ້ປະຈຳຕົວ ຂອງທ່ານທັນທີ. ຖ້າທ່ານພົບເຫັນເຫດການທີ່ໜ້າສົງໃສ ຫລືເຫັນການເຄື່ອນໄຫວຂອງບຸກຄົນທີ່ຢູ່ໃນເຂດຄຸ້ມວົງສັງຄົມຂອງທ່ານ, ລວມທັງເຊັ່ນ ຄິດວ່າເຂົາອາດຈະມີການຜະລິດເຊື້ອໂຣກເພື່ອຈະນຳໄປໃຊ້ແທນເປັນອາວຸດ, ໃຫ້ແຈ້ງກັບເຈົ້າໜ້າຕຳຣວດໃນທ້ອງທີ່ຂອງທ່ານທັນທີ.